ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

<u>ອົງການອະທິໄອຍະການ</u>

<u>ປະຊາຊົນແຫ່ງ ສປປລ.</u>

<u>ເລກທີ 7 /ອທກ.</u>

<u>ຄຳສັ່ງ ແນະ ນຳ</u>

ເຖິງ ໄອຍະການປະຊາຊົນແຂວງ, ກຳແພງນະຄອນ

<u>ໃນທົ່ວປະເທດ.</u>

<u>ເລື່ອງ</u>: ການຄິດໄລ່ກຳນົດເວລາປະຕິບັດໂທດຕາມມາດຕາ 43 ກົດໝາຍອາຍາ .

ໄດ້ສັງເກດເຫັນວ່າ ການຄິດໄລ່ການປະຕິບັດໂທດຕັດອິດສະລະພາບບໍ່ເປັນເອກະພາບກັນໃນທົ່ວປະເທດ ຕາມມາດຕາ 43 ກົດໝາຍອາຍາ, ໃນການປະຕິບັດໂທດຕັດອິດສະລະພາບ ໃຫ້ນັບແຕ່ມື້ກັກຂັງພາງເປັນຕົ້ນໄປ ໝາຍຄວາມວ່ານັບແຕ່ມື້ໄອຍະການປະຊາຊົນອອກຄຳສັ່ງກັກຂັງພາງຕາມມາດຕາ 50 ກົດໝາຍດຳເນີນຄະດີອາຍາ. ສ່ວນກຳນົດເວລາກັກຕົວສາມມື້ທີ່ບົ່ງໄວ້ໃນມາດຕາ 46 ກົດໝາຍດຳເນີນຄະດີອາຍານັ້ນບໍ່ໃຫ້ຄິດໄລ່ເຂົ້າໃນການປະຕິບັດໂທດ.

ສະນັ້ນຄຳສັ່ງກັກຕົວຂອງເຈົ້າໜ້າທີ່ສືບສວນ-ສອບສວນ, ພະນັກງານສອບສວນຈຶ່ງມີກຳນົດເວລາສາມມື້ນັ້ນຕ້ອງປະຕິບັດຢ່າງເຂັ້ມງວດ ເພື່ອບໍ່ໃຫ້ຜູ້ຖືກກັກຕົວໄດ້ຮັບຄວາມເສັຍປະໂຫຍດ ເພາະວ່າກຳນົດເວລາກັກຕົວຈະບໍ່ໄດ້ຖືກຄິດໄລ່ເຂົ້າໃນການປະຕິບັດໂທດ. ແຕ່ກ່ອນການປະກາດໃຊ້ກົດໝາຍອາຍາແລະກົດໝາຍດຳເນີນຄະດີອາຍາ ໄດ້ມີການຫລຸດຜ່ອນໂທດໃຫ້ແກ່ຜູ້ປະຕິບັດໂທດໃນແຕ່ລະໄລຍະ ໂດຍອີງຕາມຄວາມກ້າວໜ້າຂອງນັກໂທດ, ກຳນົດເວລາຫລຸດຜ່ອນໂທດໃຫ້ນັກໂທດນັ້ນກໍ່ໃຫ້ຄິດໄລ່ເຂົ້າໃນການປະຕິບັດໂທດເໝືອນກັນ.

ວຽງຈັນ, ວັນທີ 30 ພະຈິກ 1992.

ອະທິໄອຍະການປະຊາຊົນ.

ພາຍ ຊູລາ